ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----------------

ສຳນັກງານນາຍົກລັດຖະມົນຕີ

ເລກທີ ໒໕໓/ນຍ

ນະຄອນຫຼວງວຽງຈັນ, ວັນທີ ໑໒-໐໘-໒໐໐໕

# ດຳລັດ

## ວ່າດ້ວຍ ດັດສະນີເງິນເດືອນພື້ນຖານ ຂອງກຳລັງປະກອບອາວຸດ

- ອີງຕາມກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມດຳລັດ ຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 157/ນຍ, ລົງວັນທີ 6 ຕຸລາ 2004 ວ່າດ້ວຍ ການປະກາດໃຊ້ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ ສົກປີ 2004-2005;
- ອີງຕາມເອກະສານສະເໜີ ຂອງກະຊວງປ້ອງກັນປະເທດ ສະບັບເລກທີ 1185/ກປທ, ລົງວັນທີ 7 ກໍລະກົດ 2005 ແລະ ຂອງທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 07/ທປຄ, ລົງວັນທີ 19 ກໍລະກົດ 2005;

**ນາຍົກລັດຖະມົນຕີ ອອກດຳລັດ :**

**ມາດຕາ 1. ຈຸດປະສົງ.**

ດຳລັດສະບັບນີ້ ບັນຍັດການປັບປຸງເງິນເດືອນພື້ນຖານ ຂອງກຳລັງປະກອບອາວຸດ ບົນພື້ນຖານການປັບປຸງຊັ້ນ, ຈຳນວນ ແລະ ມູນຄ່າດັດສະນີເງິນເດືອນ ເພື່ອຮັບປະກັນໃຫ້ຊີວິດການເປັນຢູ່ຂອງນາຍ ແລະ ພົນທະຫານ, ຕຳຫລວດດີຂຶ້ນ, ທັງໃຫ້ສອດຄ່ອງກັບລະດັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມຂອງປະເທດ ແລະ ຄວາມສາມາດໃນການຕອບສະໜອງຂອງງົບປະມານແຫ່ງລັດ.

**ມາດຕາ 2. ວິທີການຄິດໄລ່ເງິນເດືອນພື້ນຖານ.**

ເງິນເດືອນພື້ນຖານຂອງນາຍ ແລະ ພົນທະຫານ, ຕຳຫລວດ ຄິດໄລ່ໂດຍເອົາມູນຄ່າດັດສະນີເງິນເດືອນ ຄູນໃຫ້ຈຳນວນດັດສະນີເງິນເດືອນ ທີ່ກຳນົດໃນມາດຕາ 3 ຂອງດຳລັດສະບັບນີ້.

**ມາດຕາ 3. ການກຳນົດຈຳນວນດັດສະນີເງິນເດືອນ.**

ຈຳນວນດັດສະນີເງິນເດືອນ ຂອງກຳລັງປະກອບອາວຸດຖືກກຳນົດຕາມຊັ້ນດັ່ງນີ້:

| ລ/ດ | ຊັ້ນນາຍ ແລະ ພົນທະຫານ | ຈຳນວນດັດສະນີ | ຊັ້ນ-ຂັ້ນເງິນເດືອນ |
|---|---|---|---|
| 1 | ພົນເອກ | 485 | 6/3 |
| 2 | ພົນໂທ | 450 | 6/2 |
| 3 | ພົນຕີ | 425 | 6/1 |
| 4 | ພົນຈັດຕະວາ | 399 | 5/13 |
| 5 | ພັນເອກ | 333 | 5/7 |
| 6 | ພັນໂທ | 315 | 4/13 |
| 7 | ພັນຕີ | 288 | 4/10 |
| 8 | ຮ້ອຍເອກ | 254 | 4/6 |
| 9 | ຮ້ອຍໂທ | 233 | 4/3 |
| 10 | ຮ້ອຍຕີ | 219 | 4/1 |
| 11 | ວາທີ | 205 | 3/7 |
| 12 | ສິບເອກ | 195 | 3/5 |
| 13 | ສິບໂທ | 180 | 2/10 |
| 14 | ສິບຕີ | 156 | 2/4 |
| 15 | ຊັ້ນ I | 150 | 1/10 |
| 16 | ຊັ້ນ II | 144 | 1/8 |

**ມາດຕາ 4. ການເພີ່ມມູນຄ່າດັດສະນີເງິນເດືອນ.**

ມູນຄ່າດັດສະນີເງິນເດືອນ ຂອງກຳລັງປະກອບອາວຸດເພີ່ມຂຶ້ນ ໂດຍສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ - ສັງຄົມຂອງຊາດໃນແຕ່ລະໄລຍະ ແລະ ຕາມການຕົກລົງຂອງລັດຖະບານ ແລະ ການຮັບຮອງຂອງສະພາແຫ່ງຊາດ.

**ມາດຕາ 5.** ມອບໃຫ້ກະຊວງການເງິນ, ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ຄິດໄລ່ເງິນເດືອນພື້ນຖານຂອງກຳລັງປະກອບອາວຸດຕາມຊັ້ນ, ຈຳນວນ ແລະ ມູນຄ່າສະນີເງິນເດືອນ ທີ່ກຳນົດໃນມາດຕາ 3 ແລະ ມາດຕາ 4 ຂອງດຳລັດສະບັບນີ້. ສ່ວນການຈັດຕັ້ງປະຕິບັດຕົວຈິງ ເງິນເດືອນຕາມຊັ້ນ-ຂັ້ນໃໝ່ ແມ່ນໃຫ້ເລີ່ມຕົ້ນແຕ່ ວັນທີ 1 ຕຸລາ 2005 ເປັນຕົ້ນໄປ.

**ມາດຕາ 6.** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ນິຕິກຳ ຫລື ບົດບັນຍັດໃດທີ່ປະກາດໃຊ້ໃນເມື່ອກ່ອນ ຫາກຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

NK808